ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

************************

ສະມາຄົມມິດຕະພາບ ລາວ ຍີ່ປຸ່ນ ສູນກາງ

ເລກທີ 12 /ສມລ-ຍ

ນະຄອນຫຼວງວຽງຈັນ,ວັນທີ 6 ເມສາ2011

## ຂໍ້ຕົກລົງ

## ຂອງປະທານສະມາຄົມມິດຕະພາບ ລາວ-ຍີ່ປຸ່ນ ວ່າດ້ວຍການແຕ່ງຕັ້ງຄະນະສະມາຄົມອະດີດນັກສຶກສາລາວ ຈາກ ປະເທດຍີ່ປຸ່ນ ຊຸດທີ IV

- ອີງຕາມໃບສະເໜີຂອງສະມາຄົມອະດີດນັກສຶກສາລາວຈາກປະເທດຍີ່ປຸ່ນ ສະບັບລົງວັນທີ 25 / 3/ 2011 ວ່າດ້ວຍການຂໍສະເໜີແຕ່ງຕັ້ງຄະນະສະມາຄົມອະດີດນັກສຶກສາລາວຈາກປະເທດຍີ່ປຸ່ນ ແລະ ທີ່ປຶກສາຂອງສະມາຄົມ ຊຸດທີ IV.

**ປະທານສະມາຄົມມິດຕະພາບ ລາວ ຍີ່ປຸ່ນ ສູນກາງຕົກລົງ:**

<u>ມາດຕາ1</u>: ແຕ່ງຕັ້ງປະທານ, ຮອງປະທານ ແລະ ທີ່ປຶກສາຂອງສະມາຄົມອະດີດນັກສຶກສາລາວຈາກປະເທດຍີ່ປຸ່ນ ຊຸດທີ IV ຊຶ່ງປະກອບດ້ວຍບັນດາທ່ານດັ່ງລຸ່ມນີ້:

1.1. ທ່ານ ຈັນຊະນະ ສີຈັນທອງທັບ, ຫົວໜ້າພະແນກເຕັກໂລໂນຊີ ຂໍ້ມູນຂ່າວສານ, ຫ້ອງການຄະນະເລຂາທິການລັດຖະບານ, ສຳນັກງານນາຍົກລັດຖະມົນຕີ, ເປັນປະທານ;

1.2. ທ່ານ ດຣ. ກິງແກ້ວ ທາມາວັນ, ອາຈານສອນ, ຄະນະວິສະວະກຳສາດ, ມະຫາວິທະຍາໄລແຫ່ງຊາດ ກະຊວງສຶກສາທິການ, ເປັນຮອງປະທານຜູ້ທີ 1;

1.3. ທ່ານ ນາງ ປາລິນາ ເພັດສີລິແສງ, ອຳນວຍການ ກຸ່ມເຮືອນພັກວິນລາທາດຫຼວງ, ເປັນຮອງປະທານຜູ້ທີ 2;

1.4. ທ່ານ ຄຳມ່ອນ ຊົມສີທາປັນຍາ, ຜູ້ອຳນວຍການໃຫຍ່ ບໍລິສັດ ລັດວິສາຫະກິດໂທລະຄົມລາວ, ເປັນທີ່ປຶກສາ.

1.5. ທ່ານ ດຣ. ພອນແກ້ວ ຈັນທະມາລີ, ຜູ້ອຳນວຍການສູນ ICT ມະຫາວິທະຍາໄລແຫ່ງຊາດ, ກະຊວງສຶກສາທິການ (ປະທານຊຸດທີ I), ເປັນທີ່ປຶກສາ.

1.6. ທ່ານ ປັນຍາ ຈັນທະວົງ, ຮອງຜູ້ອຳນວຍການສູນປະກັນຄຸນນະພາບການສຶກສາ, ກະຊວງສຶກສາທິການ (ປະທານຊຸດທີ III), ເປັນທີ່ປຶກສາ.

**ມາດຕາ 2**: ສະມາຄົມອະດີດນັກສຶກສາລາວຈາກປະ ເທດຍີ່ປຸ່ນແມ່ນເປັນສະມາຊິກລວມໝູ່ຂອງ ສະມາຄົມມິດຕະພາບ ລາວຍີ່ປຸ່ນສູນກາງ.

**ມາດຕາ 3**: ສະເໜີມາຍັງການຈັດຕັ້ງພັກ-ລັດ, ເອກະຊົນ ແລະ ຜູ້ທີ່ໄດ້ຮັບການແຕ່ງຕັ້ງຈົ່ງຮັບຮູ້ ແລະ ປະຕິບັດຕາມຂໍ້ຕົກລົງສະບັບນີ້ຈົນກວ່າຈະມີການປ່ຽນແປງ.

**ມາດຕາ 4**: ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ, ສ່ວນເອກະສານອື່ນໆ ທີ່ຂັດກັບຂໍ້ຕົກລົງສະບັບນີ້ລ້ວນແຕ່ຖືກລົບລ້າງ.

ປະທານສະມາຄົມມິດຕະພາບ ລາວ-ຍີ່ປຸ່ນ ສູນກາງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສະມາຄົມ ມິດຕະພາບ ລາວ-ຍີ່ປຸ່ນ

ດຣ. ປອນເມກ ດາລາລອຍ